# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ..........................................ໜ້າ 01 - 05

II. ການເຄື່ອນໄຫວວຽກງານຂອງການນຳຄະນະພົວພັນຕ່າງປະເທດສູນກາງພັກ..........ໜ້າ 05 - 11


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ ເມສາ 2021


**ສຳນັກງານຕັ້ງຢູ່ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໂທລະສັບ 021 417470,**

**Fax 021 414043, Email: Ri.dept.la@Gmail.com, Website: cerccp.gov.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

ໃນເດືອນ ເມສາ 2021, ຄະນະສະເພາະກິດ ເພື່ອປ້ອງກັນ, ຕ້ານ ແລະ ສະກັດກັ້ນ ພະຍາດ ໂຄວິດ-19 ໄດ້ກວດພົບເຫັນປະຊາຊົນຜູ້ຕິດເຊື້ອພະຍາດ ໂຄວິດ-19 ເພີ່ມຂຶ້ນຢ່າງໄວວາ. ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ-19 ບໍ່ໃຫ້ຂະຫຍາຍເປັນວົງກ້ວາງ, ພັກ-ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ອອກຄຳສັ່ງ ແລະ ແຈ້ງການຕ່າງໆ ໃຫ້ປະຊາຊົນລາວ, ຊາວຕ່າງດ້າວ ທີ່ທຳມາຫາກິນ ຢູ່ ສປປ ລາວ, ບັນດາສຳນັກງານຜູ້ຕາງໜ້າຂອງຕ່າງປະເທດປະຈຳ ສປປ ລາວ ແຕ່ສູນກາງຮອດທ້ອງຖິ່ນ ຈົ່ງພ້ອມກັນຮ່ວມມື ແລະ ເອົາໃຈໃສ່ປ້ອງກັນ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດດັ່ງກ່າວ ເປັນຕົ້ນແມ່ນ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/4/2021; ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄລສພ, ລົງວັນທີ 25/4/2021; ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 406/ຫສນຍ, ລົງວັນທີ 26/4/2021 ແລະ ອື່ນໆ. ມາເຖິງວັນທີ 30/4/2021 ສປປ ລາວມີຜູ້ຕິດເຊື້ອພະຍາດໂຄວິດ-19 ສະສົມຈຳນວນ 757 ກໍລະນີ, ປິ່ນປົວຫາຍດີ 51 ກໍລະນີ, ສືບຕໍ່ປິ່ນປົວ 706 ກໍລະນີ, ຍັງບໍ່ມີຜູ້ເສຍຊີວິດ.

## 2. ສະພາບການສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

30/04/ 2021, ຕົວເລກຜູ້ຕິດເຊື້ອໂຄວິດ-19 ທັງໝົດມີ 151,123,545 ກໍລະນີ, ເສຍຊີວິດ 3,179,273 ຄົນ ແລະ ປິ່ນປົວຫາຍດີ 128,514,723 ກໍລະນີຢູ່ 200 ກວ່າປະເທດ ແລະ ເຂດປົກຄອງຕ່າງໆໃນທົ່ວໂລກ. ຈຳນວນຜູ້ຕິດເຊື້ອຫຼາຍທີ່ສຸດໃນໂລກ 3 ອັນດັບຍັງແມ່ນ ອາເມລິກາ ມີຜູ້ຕິດເຊື້ອ 32,983,695 ກໍລະນີ, ເສຍຊີວິດ 588,337 ຄົນ; ອິນເດຍ ມີຜູ້ຕິດເຊື້ອ 18,368,096 ກໍລະນີ, ເສຍຊີວິດ 204,812 ຄົນ; ບຣາຊິນ ມີຜູ້ຕິດເຊື້ອ 14,523,807 ກໍລະນີ, ເສຍຊີວິດ 398,343 ຄົນ; ໃນຂົງເຂດປະເທດອາຊຽນ ຈຳນວນຜູ້ຕິດເຊື້ອຫຼາຍທີ່ສຸດແມ່ນປະເທດ ອິນໂດເນເຊຍ ມີຜູ້ຕິດເຊື້ອທັງໝົດ 1,657,305 ກໍລະນີ, ເສຍຊີວິດ 45,116 ຄົນ; ຟີລິບປິນ ມີຜູ້ຕິດເຊື້ອທັງໝົດ 1,020,495 ຄົນ, ເສຍຊີວິດ 17,031 ຄົນ ແລະ ມາເລເຊຍ ມີຜູ້ຕິດເຊື້ອທັງໝົດ 401,593 ກໍລະນີ, ເສຍຊີວິດ 1,477 ຄົນ.

### 2) 4 ລັດຖະມົນຕີຕ່າງປະເທດອາຊຽນ ແລະ ລັດຖະມົນຕີຕ່າງປະເທດ ສ. ເກົາຫຼີ ເດີນທາງຢ້ຽມຢາມ ສປ ຈີນ

ແຕ່ວັນທີ 31 ມີນາ ຫາ 2 ເມສາ 2021, ລັດຖະມົນຕີຕ່າງປະເທດ 4 ປະເທດອາຊຽນ ຄື: ສິງກະໂປ, ມາເລເຊຍ, ອິນໂດເນເຊຍ ແລະ ຟີລິບປິນ ໄດ້ເດີນທາງຢ້ຽມຢາມ ສປ ຈີນ ແລະ ພົບປະໂອ້ລົມກັບຄູ່ຮ່ວມຕຳແໜ່ງ ສປ ຈີນ, ໄດ້ປຶກສາຫາລືກ່ຽວກັບການພົວພັນຮ່ວມມື ລະຫວ່າງ ສອງຝ່າຍ; ແລະ ບັນຫາຂອງສາກົນ ແລະ ພາກພື້ນ. ພ້ອມນັ້ນ, ໄດ້ແລກປ່ຽນສະພາບການຂອງ ມຽນມາ, ເຊິ່ງ ທ່ານ ຫວັງ ອີ້, ທີ່ປຶກສາແຫ່ງລັດ, ລັດຖະມົນຕີຕ່າງປະເທດ ສປ ຈີນ ໃຫ້ທັດສະນະວ່າອາຊຽນ ມີບົດບາດສຳຄັນໃນການສົ່ງເສີມສະຖຽນລະພາບໃນມຽນມາ, ສປ ຈີນ ສະໜັບສະໜູນຫຼັກການບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງປະເທດສະມາຊິກອາຊຽນ. ຄຽງຄູ່ກັນນັ້ນ, ຍັງໄດ້ປຶກສາຫາລືກ່ຽວກັບການອອກໃບຢັ້ງຢືນສຸຂະພາບເພື່ອສົ່ງເສີມການເດີນທາງລະຫວ່າງອາຊຽນກັບ ສປ ຈີນ ໃນໄລຍະການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19. ສ່ວນການພົບປະລະຫວ່າງ ລັດຖະມົນຕີຕ່າງປະເທດ ສປ ຈີນ ແລະ ສ.ເກົາຫຼີ, ສອງຝ່າຍຈະສືບຕໍ່ຮ່ວມມືໃນຫຼາຍຂົງເຂດເຊັ່ນ: ດ້ານເສດຖະກິດ, ຕ້ານການລະບາດຂອງພະຍາດ ໂຄວິດ-19 ແລະ ຈະຮ່ວມມືຊຸກຍູ້ໃຫ້ມີສັນຕິພາບໃນແຫຼມເກົາຫຼີ.

3) **ກອງປະຊຸມຜູ້ນຳອາຊຽນ ສະໄໝພິເສດ ຄັ້ງວັນທີ 24/4/2021**

ໃນວັນທີ 24/4/2021, ບັນດາຜູ້ນຳອາຊຽນໄດ້ເຂົ້າຮ່ວມກອງປະຊຸມສະໄໝພິເສດ ທີ່ນະຄອນຫຼວງ ຈາກາຕາ, ປະເທດອິນໂດເນເຊຍ, ຊຶ່ງໄດ້ປຶກສາຫາລືຫຼາຍບັນຫາສຳຄັນ ເປັນຕົ້ນການຮ່ວມມືປ້ອງກັນ, ຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດ ໂຄວິດ-19; ຮ່ວມມືພັດທະນາເສດທະກິດ ພາຍຫຼັງໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ; ດ້ານຄວາມໝັ້ນຄົງໃນພາກພື້ນ; ເພີ່ມທະວີການຮ່ວມມືກັບຄູ່ຮ່ວມມືອາຊຽນ ເພື່ອຍົກສູງບົດບາດ ອາຊຽນ ໃນເວທີໂລກ. ສຳລັບການແກ້ໄຂບັນຫາມຽນມາ, ກອງປະຊຸມໄດ້ເຫັນດີເປັນເອກະສັນ 5 ຂໍ້ຄື:

1./ ໃຫ້ທຸກຝ່າຍຂອງມຽນມາ ຢຸດຕິການໃຊ້ຄວາມຮຸນແຮງ.

2./ ໃຫ້ທຸກຝ່າຍທີ່ກ່ຽວຂ້ອງຂອງມຽນມາ ຫັນໜ້າເຂົ້າເຈລະຈາບັນຫາໂດຍສັນຕິວິທີເພື່ອຜົນປະໂຫຍດຂອງປະຊາຊົນມຽນມາ.

3./ ແຕ່ງຕັ້ງທູດພິເສດອາຊຽນເພື່ອເຮັດໜ້າທີ່ເປັນຄົນກາງໃນການປຶກສາຫາລືກັບຝ່າຍຕ່າງໆທີ່ກ່ຽວຂ້ອງຂອງມຽນມາ.

4./ ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳໃຫ້ແກ່ປະຊາຊົນມຽນມາ ໂດຍຜ່ານສູນປະສານງານ ອາຊຽນ ໃນການຄຸ້ມຄອງໄພພິບັດ (AHA Centre).

5./ ມຽນມາຕ້ອງອຳນວຍຄວາມສະດວກໃຫ້ທູດພິເສດອາຊຽນເຂົ້າໄປໃນ ມຽນມາ ເພື່ອພົບປະປຶກສາຫາລືກັບຝ່າຍຕ່າງໆທີ່ກ່ຽວຂ້ອງ.

4) **ລັດເຊຍ**

- ລັດເຊຍ ໄດ້ເຕືອນບັນດາປະເທດຕາເວັນຕົກກ່ຽວກັບການສົ່ງກຳລັງທະຫານ ເຂົ້າໄປປະຈຳການຢູ່ ອູແກຣນ ຖືເປັນການກະທຳຍຸແຍ່ທີ່ຮ້າຍແຮງ ແລະ ຈະນຳໄປສູ່ສະພາບຄວາມເຄັ່ງຕຶງຂຶ້ນຢູ່ບໍລິເວນຊາຍແດນທີ່ຕິດກັບລັດເຊຍ. ຂະນະດຽວກັນ, ລັດເຊຍຈະເພີ່ມກຳລັງ ປະຈຳຢູ່ເຂດຊາຍແດນດັ່ງກ່າວ ເພື່ອຮັບປະກັນຄວາມໝັ້ນຄົງແຫ່ງຊາດຂອງຕົນ. ວັນທີ 5 ເມສາ 2021, ເຈົ້າໜ້າທີ່ກະຊວງການຕ່າງປະເທດລັດເຊຍໄດ້ໃຫ້ທັດສະນະຕໍ່ແຜນຂອງ ສ. ອາເມລິກາ ແລະ ອັງກິດ ໃນການສືບຕໍ່ລະບົບລູກສອນໄຟພິໄສໃກ້ ແລະ ພິໄສກາງ ຢູ່ທະວີບເອີລົບ ແລະ ພາກພື້ນອາຊີ-ປາຊີຟິກ ເປັນການລະເມີດສົນທິສັນຍາວ່າດ້ວຍອາວຸດນິວເຄຼຍພິໄສໃກ້ ແລະ ພິໄສກາງ (INF) ທີ່ ສ. ອາເມລິກາ ໄດ້ເຊັນຮ່ວມກັບລັດເຊຍ ປີ 1987, ແຕ່ ສ. ອາເມລິກາ ໄດ້ຖອນຕົວອອກຈາກສົນທິສັນຍາດັ່ງກ່າວ ໃນເດືອນ ສິງຫາ ປີ 2019. ໃນວັນດຽວກັນ ທ່ານ ວລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ລົງນາມໃນກົດໝາຍ ເພື່ອອະນຸຍາດໃຫ້ ປະທານາທິບໍດີລັດເຊຍສາມາດສືບຕໍ່ບໍລິຫານປະເທດອີກເປັນສະໄໝທີ 05 ຈົນເຖິງປີ 2024 ແລະ ອາດຈະສືບຕໍ່ເປັນປະທານາທິບໍດີ ຮອດປີ 2036. ການລົງນາມໃນກົດໝາຍສະບັບດັ່ງກ່າວ ມີຂຶ້ນພາຍຫຼັງທີ່ລັດເຊຍໄດ້ຮັບຮອງເອົາລັດຖະທຳມະນູນສະບັບປັບປຸງໃໝ່ໃນປີຜ່ານມາ.
- ທ່ານ Josep Borrell, ເຈົ້າໜ້າທີ່ລະດັບສູງດ້ານນະໂຍບາຍການຕ່າງປະເທດຂອງ ສະຫະພາບເອີຣົບ ກ່າວວ່າ ລັດເຊຍໄດ້ນຳເອົາທະຫານຈຳນວນ 150,000 ຄົນ ເຂົ້າໃກ້ເຂດຊາຍແດນ ອູແກຼນ ແລະ ຄູາຍເມຍ, ເຊິ່ງເປັນການເຄື່ອນຍ້າຍກຳລັງທີ່ໃຫຍ່ທີ່ສຸດນັບແຕ່ປີ 2014 ເປັນຕົ້ນມາ. ສະຫະພາບເອີຣົບໃຫ້ທັດສະນະວ່າ: ການປະຕິບັດການຂອງລັດເຊຍດັ່ງກ່າວ ຈະພາໃຫ້ເກີດຄວາມເຄັ່ງຕຶງລະຫວ່າງ ລັດເຊຍ ແລະ ອູແກຣນ ຍິ່ງເພີ່ມທະວີຂຶ້ນ. ເອີຣົບຈະຕິດຕາມ ແລະ ຮຽກຮ້ອງໃຫ້ ອູແກຼນ ມີຄວາມອົດກັ້ນ ແລະ ຢືນຢັນ ຈະຢູ່ຄຽງຂ້າງອູແກຼນ.

5) **ຜົນການພົບປະສອງຝ່າຍລະຫວ່າງ ຜູ້ນຳ ປະເທດຍີ່ປຸ່ນ - ສ. ອາເມລິກາ**

ວັນທີ 17 ເມສາ 2021, ທ່ານ ໂຢຊິຮິເດ ຊູກະ, ນາຍົກລັດຖະມົນຕີ ຍີ່ປຸ່ນ ໄດ້ເດີນທາງຢ້ຽມຢາມ ແລະ ພົບປະກັບທ່ານ ໂຈ ໄບເດີນ, ປະທານາທິບໍດີ ສ.ອາເມລິກາ. ສອງຝ່າຍໄດ້ປຶກສາຫາລືຫຼາຍບັນຫາ ເປັນຕົ້ນແມ່ນການເພີ່ມທະວີການພົວພັນຮ່ວມມືສອງຝ່າຍ ດ້ານການທະຫານ, ການຮ່ວມມືດ້ານເຕັກໂນໂລຊີ ( 5 G ), ການປ່ຽນແປງດິນຟ້າອາກາດ, ບັນຫາແຫຼມ ເກົາຫຼີ, ຄວາມໝັ້ນຄົງໃນພາກພື້ນອາຊີ-ປາຊີຟິກ. ພ້ອມກັນນັ້ນ, ສອງຝ່າຍ ຍັງໄດ້ອອກຖະແຫຼງການຮ່ວມ ກ່ຽວກັບ ບັນຫາ ສິທິມະນຸດ ໃນ ສປ ຈີນ, ບັນຫາທະເລຈີນໃຕ້, ບັນຫາການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ແລະ ອື່ນໆ.

ຂະນະດຽວກັນ, ທ່ານ ຫວັງອີ້, ລັດຖະມົນຕີຕ່າງປະເທດ ສປ ຈີນ ໄດ້ໃຫ້ທັດສະນະຕໍ່ກັບການພົບປະຂອງສອງຜູ້ນໍາ ຍີ່ປຸ່ນ-ສ. ອາເມລິກາ ວ່າ: 1). ຈີນ ປະຕິເສດການກໍານົດຫຼັກການໃນການພົວພັນສາກົນທີ່ສ້າງຂຶ້ນໂດຍ ຍີ່ປຸ່ນ ແລະ ສ. ອາເມລິກາ, ທຸກຝ່າຍຕ້ອງຍຶດຖື ກົດບັດ ສປຊ ເປັນຫຼັກການພື້ນຖານໃນການພົວພັນຮ່ວມມືສາກົນ. ການກະທໍາຂອງ ຍີ່ປຸ່ນ ແລະ ສ. ອາເມລິກາ ເປັນການທໍາລາຍ ສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ. 2). ຍີ່ປຸ່ນ ແລະ ສ. ອາເມລິກາ ໄດ້ແຊກແຊງກິດຈະການພາຍໃນຂອງ ສປ ຈີນ ກ່ຽວກັບບັນຫາສິດທິມະນຸດ, ພວກກ່ຽວຄວນສໍານຶກເຖິງການກະທໍາຂອງຕົນເອງໃນການກໍ່ສົງຄາມຮຸກຮານປະເທດອື່ນເຮັດໃຫ້ປະຊາຊົນເສຍຊີວິດຫຼາຍລ້ານຄົນ. 3). ຍີ່ປຸ່ນ ແລະ ສ. ອາເມລິກາ ຄວນຢຸດຕິການກ່າວຫາວ່າ ສປ ຈີນ ເປັນແຫຼ່ງກໍາເນີດ ແລະ ແຜ່ລະບາດຂອງເຊື້ອພະຍາດໂຄວິດ 19, ຮຽກຮ້ອງທຸກຝ່າຍຮ່ວມມືກັນເພື່ອປ້ອງກັນພະຍາດດັ່ງກ່າວ.

6) **ກອງປະຊຸມເອທີປຶກສາຫາລື ໂບອາວ ປະຈໍາປີ 2021 ( Boao Forum for Asia Annual Conference 2021).**

ແຕ່ວັນທີ 18-21 ເມສາ 2021, ກອງປະຊຸມເອທີປຶກສາຫາລື ໂບອາວ ໄດ້ຈັດຂຶ້ນທີ່ເມືອງ ໂບອາວ (Boao) ແຂວງ ຮາຍນານ (Hainan), ສປ ຈີນ. ພາຍໃຕ້ຫົວຂໍ້ "ການຮ່ວມມືກັນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານໂລກ ແລະ ເພີ່ມທະວີການຮ່ວມມືໃນຂໍ້ລິເລີ່ມໜຶ່ງແລວ ໜຶ່ງເສັ້ນທາງ ໃນອະນາຄົດ" (A World in Change: Join Hands to Strengthen Global Governance and Advance Belt and Road Initiative (BRI) Cooperation) ໂດຍມີຜູ້ເຂົ້າຮ່ວມຫຼາຍກວ່າ 2,000 ຄົນຈາກ 60 ປະເທດ ແລະ ເຂດແຄ້ວນຕ່າງໆ. ກອງປະຊຸມໄດ້ປຶກສາຫາລືກ່ຽວກັບການເຊື່ອມຈອດເສດຖະກິດອາຊີ ກັບ ເສດຖະກິດໂລກ ເພື່ອພັດທະນາເສດຖະກິດໃນອາຊີໃຫ້ບັນລຸຕາມເປົ້າໝາຍ, ເສດຖະກິດທີ່ທັນສະໄໝ, ການປ່ຽນແປງດິນຟ້າອາກາດ, ການສົ່ງເສີມຂໍ້ລິເລີ່ມໜຶ່ງແລວ ໜຶ່ງເສັ້ນທາງ (BRI) ແລະ ເປັນການຮັດແໜ້ນຄວາມສາມັກຄີການພົວພັນຮ່ວມມືໃນພາກພື້ນ. ພ້ອມກັນນັ້ນ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດລາວກໍ່ຖືກເຊີນເຂົ້າຮ່ວມມີຄໍາເຫັນຕໍ່ກອງປະຊຸມ ເຊັ່ນດຽວກັບຜູ້ນໍາຫຼາຍປະເທດໃນອາຊີ.

## 3. ການເຄື່ອນໄຫວຂອງບັນດາພັກການເມືອງເພື່ອນມິດຍຸດທະສາດ

### 1) ພັກກອມມູນິດຫວຽດນາມ

ວັນທີ 08/04/2021, ກອງປະຊຸມຄັ້ງທີ 11 ຂອງສະພາແຫ່ງຊາດຫວຽດນາມ ຊຸດທີ 14 ໄດ້ລົງຄະແນນສຽງຮັບຮອງ ສະຫາຍ ຫວງຽນ ຊວນຟຸກ, ກໍາມະການກົມການເມືອງສູນກາງພັກ ເປັນປະທານປະເທດຄົນໃໝ່, ສະຫາຍ ນາງ ຫວໍທິ ແອ່ງຊວນ, ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດ, ປະທານສະພາເຂດ, ເລຂາຄະນະພັກແຂວງ An Giang ເປັນຮອງປະທານປະເທດຄົນໃໝ່, ສະຫາຍ ຟາມ ມິງຈິ່ງ, ກໍາມະການກົມການເມືອງສູນກາງພັກ ເປັນນາຍົກລັດຖະມົນຕີຄົນໃໝ່, ສະຫາຍ ເລ ມິງຄາຍ, ກໍາມະການສູນກາງພັກ, ເລຂາທິການສູນກາງພັກ ເປັນຮອງນາຍົກລັດຖະມົນຕີ; ສະຫາຍ ເລ ວັນແທງ, ກໍາມະການສູນກາງພັກ, ເປັນຮອງນາຍົກລັດຖະມົນຕີ ຫວຽດນາມ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຮອງເອົາການແຕ່ງຕັ້ງລັດຖະມົນຕີກະຊວງຕ່າງໆຈໍານວນ 12 ສະຫາຍ. ໃນນັ້ນ ສະຫາຍ ບຸນ ແທງຊົນ, ເປັນລັດຖະມົນຕີຕ່າງປະເທດຄົນໃໝ່ ພ້ອມທັງໄດ້ແຕ່ງຕັ້ງ ສະຫາຍ ດິ່ງ ຕຽນຊຸງ, ກໍາມະການກົມການເມືອງສູນກາງພັກ, ລັດຖະມົນຕີກະຊວງການເງິນ ເປັນ ເລຂາຄະນະບໍລິຫານງານພັກ ນະຄອນຫຼວງຮ່າໂນ້ຍ.

ຂະນະດຽວກັນ, ກອງປະຊຸມຍັງໄດ້ລົງຄະແນນສຽງຮັບຮອງເອົາບັນດາຄະນະກໍາມາທິການສະພາແຫ່ງຊາດດັ່ງນີ້: ສະຫາຍ ຫວງຽນ ດັກ ວິນ, ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດ ເປັນ ປະທານກໍາມາທິການ ວຽກງານວັດທະນະທໍາ, ສຶກສາ, ຊາວໜຸ່ມ ແລະ ເຍົາວະຊົນ; ສະຫາຍ ເລ ຄວາງ ຮວຍ, ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດ ເປັນ ປະທານກໍາມາທິການວຽກງານ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ສະຫາຍ ຫວູ ຮາຍຮ່າ, ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດ ເປັນປະທານກໍາມາທິການວຽກງານຕ່າງປະເທດ; ສະຫາຍ ບຸຍ ວັນເຄືອງ, ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດ ເປັນ ຜູ້ປະຈໍາການເລຂາທິການສະພາແຫ່ງຊາດ; ສະຫາຍ ເຈິ່ນ ຊີແທ່ງ, ກໍາມະການສູນກາງພັກ, ຮອງຫົວໜ້າຫ້ອງວ່າການສະພາ ເປັນປະທານອົງການກວດສອບແຫ່ງລັດ.

**2) ພັກກອມມູນິດຈີນ**

- ວັນທີ 20/04/2021; ພັກກອມມູນິດຈີນ ແລະ ພັກເອກະພາບລັດເຊຍ( United Russia Party ) ໄດ້ເປີດກອງປະຊຸມພົບປະທາງໄກຂອງສອງພັກຄັ້ງທີ 9, ເຊິ່ງຝ່າຍຈີນນໍາໂດຍ ສະຫາຍ Song Tao, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ແລະ ຝ່າຍຣັດເຊຍນໍາໂດຍ ສະຫາຍ Boris Gryzlov, ປະທານສະພາສູງຂອງພັກເອກະພາບລັດເຊຍ. ສອງຝ່າຍໄດ້ປຶກສາຫາລືກ່ຽວກັບການເພີ່ມທະວີຮ່ວມມືໃນຫຼາຍຂົງເຂດເຊັ່ນ: ດ້ານເສດຖະກິດ, ຄວາມໝັ້ນຄົງ, ດ້ານພັກການເມືອງ, ຈະຮ່ວມກັນສະເຫຼີມສະຫຼອງວັນສໍາຄັນເຊັ່ນ: ຄົບຮອບ 100 ປີ ວັນສ້າງຕັ້ງພັກກອມມູນິດຈີນ ແລະ ຄົບຮອບ 20 ປີ ວັນສ້າງຕັ້ງພັກເອກະພາບລັດເຊຍ; ຮ່ວມກັນຕໍ່ຖອຍພຶດຕິກໍາຂອງບັນດາປະເທດທີ່ນໍາເອົາບັນຫາປະຊາທິປະໄຕ ແລະ ສິດທິມະນຸດ ເປັນຂໍ້ອ້າງ ເພື່ອດໍາເນີນມາດຕະການລົງໂທດພຽງຝ່າຍດຽວ; ຕ້ານບັນຫາໂລກຂົ່ວດຽວ; ສະໜັບສະໜູນເຊິ່ງກັນ ແລະ ກັນໃນເວທີພາກພື້ນ ແລະ ສາກົນ, ຮ່ວມມືໃນການປ້ອງກັນ ແລະ ສະກັດກັ້ນພະຍາດ ໂຄວິດ-19 ແລະ ອື່ນໆ. ລັດເຊຍ-ສປ ຈີນ ເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ, ສອງພັກ ສອງລັດຈະເພີ່ມທະວີຄວາມແຂງແກ່ນ ແລະ ອິດທິພົນເພື່ອຕ້ານການຂະຫຍາຍອໍານາດຂອງ ສ. ອາເມລິກາ ໃນພາກພື້ນ ແລະ ສາກົນ.
- ວັນທີ 6/04/2021, ຈີນໄດ້ອອກປຶ້ມປົກຂາວ ວ່າດ້ວຍການແກ້ໄຂຄວາມທຸກຍາກ, ເຊິ່ງໄດ້ອະທິບາຍຢ່າງລະອຽດກ່ຽວກັບການລົບລ້າງຄວາມທຸກຍາກຢູ່ປະເທດຈີນ ແລະ ໃຫ້ການຮ່ວມມື-ສະໜັບສະໜູນບັນດາປະເທດ ແກ້ໄຂບັນຫາຄວາມທຸກຍາກ. ການທົດລອງ ແລະ ພຶດຕິກໍາຕົວຈິງຂອງຈີນ ໃນການແກ້ໄຂຄວາມທຸກຍາກນັ້ນ ເປັນເລື່ອງທີ່ຫຍຸ້ງຍາກພໍສົມຄວນ ເພາະທຸກໆປະເທດລ້ວນແຕ່ມີເງື່ອນໄຂທີ່ແຕກຕ່າງກັນ ແຕ່ບາງອົງປະກອບສໍາຄັນຂອງຜົນສໍາເລັດຂອງຈີນ ແມ່ນການຍຶດຖືປັດຊະຍາທີ່ຖືປະຊາຊົນເປັນໃຈກາງ, ຍຸດທະສາດທີ່ສອດຄ່ອງ ແລະ ການສະໜັບສະໜູນຂອງວົງຄະນາຍາດສາກົນ. ພັກ ແລະ ລັດຖະບານຈີນ ຍາມໃດກໍ່ຖືເອົາປະຊາຊົນເປັນຈຸດໃຈກາງໃນການວາງແນວທາງນະໂຍບາຍຕ່າງໆ, ພາຍໃຕ້ການຊີ້ນໍານໍາພາຂອງສູນກາງພັກກອມມູນິດ ຈີນ, ເຄືອຂ່າຍອັນກວ້າງໃຫຍ່ໃນການແກ້ໄຂຄວາມທຸກຍາກ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນແຕ່ສູງກາງຮອດທ້ອງຖິ່ນ, ທຸກຂະແໜງການອຸດສາຫະກໍາ ແລະ ທຸລະກິດ ໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າ ແລະ ເຮັດວຽກຮ່ວມກັນເພື່ອບັນລຸເປົ້າໝາຍ. ພາຍໃຕ້ຄວາມພະຍາຍາມມາຫຼາຍປີ ໄດ້ເຮັດໃຫ້ປະຊາກອນທີ່ທຸກຍາກເກືອບ 100 ລ້ານຄົນ ໃນ 832 ເມືອງ ແລະ 128,000 ກວ່າບ້ານທົ່ວປະເທດ ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ ຕາມມາດຕະຖານຄວາມທຸກຍາກໃນປັດຈຸບັນ ແລະ ເພື່ອປ້ອງກັນບໍ່ໃຫ້ເຂົາເຈົ້າເຫຼົ່ານັ້ນກັບຄືນມາທຸກຍາກອີກ ລັດຖະບານກໍ່ໄດ້ວາງນະໂຍບາຍຕ່າງໆ ເປັນຕົ້ນແມ່ນການສົ່ງເສີມການຝຶກອົບຮົມສີມືແຮງງານ, ການສ້າງວຽກເຮັດງານທໍາ ແລະ ການປັບປຸງພື້ນຖານໂຄງລ່າງໃນເຂດຊົນນະບົດ. ໃນເວທີສາກົນ, ສປ ຈີນ ໃນນາມປະເທດກໍາລັງພັດທະນາທີ່ໃຫຍ່ທີ່ສຸດໃນໂລກ, ທັງເປັນປະເທດທີ່ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າຕໍ່ວຽກງານການຫຼຸດຜ່ອນຄວາມທຸກຍາກຢູ່ໃນໂລກ ກໍ່ໄດ້ປະກອບສ່ວນເຂົ້າໃນການຮ່ວມມືສາກົນ ແລະ ເຮັດວຽກຮ່ວມກັບບັນດາປະເທດໃນທົ່ວໂລກ ເພື່ອຮ່ວມມືກັນພັດທະນາ ແລະ ຮັບຜົນປະໂຫຍດຮ່ວມກັນ, ໂດຍສະເພາະແມ່ນບັນດາປະເທດໃນທະວີບອາຟຣິກກາ ແລະ ປະເທດກໍາລັງພັດທະນາອື່ນໆໃນໂລກ ຜ່ານຫຼາຍໆຂອບການຮ່ວມມື ເປັນຕົ້ນແມ່ນ ຂອບຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ".

**3) ພັກກອມມູນິດກູບາ**

ໃນລະຫວ່າງ ວັນທີ 16-19 ເມສາ 2021, ທີ່ນະຄອນຫຼວງ ລາຮາວານ, ພັກກອມມູນິດກູບາ ໄດ້ດໍາເນີນກອງປະຊຸມໃຫຍ່ ຄັ້ງທີ VIII ຂອງຕົນຂຶ້ນ ພາຍໃຕ້ການເປັນປະທານຂອງ ສະຫາຍ Raúl Castro Ruz, ເລຂາທິການທີໜຶ່ງ, ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ສະຫາຍ José Ramón Ventura, ເລຂາທິການທີ 2, ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ແລະ ສະຫາຍ Miguel Díaz-Canel, ປະທານປະເທດແຫ່ງ ສ. ກູບາ ແລະ ຜູ້ນໍາພັກ ແລະ ລັດຖະບານເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ Raúl Castro Ruz, ໄດ້ປະກາດຈະບໍ່ສືບຕໍ່ດໍາລົງຕໍາແໜ່ງເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ. ກອງປະຊຸມໄດ້ເລືອກຕັ້ງເອົາ ສະຫາຍ Miguel Díaz-Canel, ເປັນເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາຄົນໃໝ່ ແລະ ເປັນປະທານປະເທດ ກູບາ ແລະ ເລືອກເອົາກໍາມະການກົມການເມືອງສູນກາງພັກ 14 ສະຫາຍ ແລະ ຄະນະເລຂາທິການສູນກາງພັກ 6 ສະຫາຍ. ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ຕີລາຄາ ແລະ ທົບທວນຄືນການຈັດຕັ້ງຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ ແລະ ລາຍງານຜົນສໍາເລັດໃນການຈັດຕັ້ງປະຕິບັດແຜນການພັດທະນາ

ເສດຖະກິດໃນ 5 ປີຜ່ານມາ. ເນື່ອງໃນໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງສານຊົມເຊີຍເຖິງ ສະຫາຍ Miguel Díaz-Canel, ທີ່ໄດ້ຮັບເລືອກຕັ້ງເປັນເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາຄົນໃໝ່ ແລະ ເປັນປະທານປະເທດ ກູບາ.

# II. ການເຄື່ອນໄຫວວຽກງານຂອງການນຳຄະນະພົວພັນຕ່າງປະເທດສູນກາງພັກ

## 1. ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ, ຫົວໜ້າ ຄຕພ ລາວ ພົບປະທາງໄກກັບ ຫົວໜ້າ ຄຕພ ຫວຽດນາມ




ໂດຍອີງຕາມແຜນການຮ່ວມມື ລະຫວ່າງ ພັກ ປະຊາຊົນ ປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ປະຈໍາປີ 2021, ວັນທີ 1/4/2021, ສະຫາຍ ນາງ ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ພ້ອມດ້ວຍ ບັນດາສະຫາຍຕາງໜ້າ ອົງການອ້ອມຂ້າງສູນກາງພັກ ໄດ້ຕາງໜ້າການນໍາຂອງພັກ ປປ ລາວ ເຂົ້າຮ່ວມກອງປະຊຸມພົບປະຜ່ານວິດີໂອທາງໄກ ກັບ ສະຫາຍ ເລ ຮວ່າຍ ຈຸງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ກອມມູນິດຫວຽດນາມ, ຕາງໜ້າໃຫ້ການນໍາພັກກອມມູນິດຫວຽດນາມ. ໃນກອງປະຊຸມ, ສະຫາຍ ເລ ຮວ່າຍ ຈຸງ ໄດ້ແຈ້ງໃຫ້ຄະນະຝ່າຍລາວຊາບ ກ່ຽວກັບຜົນສໍາເລັດຂອງ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ທີ່ໄດ້ດໍາເນີນມາໃນທ້າຍເດືອນ ມັງກອນ ຫາຕົ້ນເດືອນກຸມພາ 2021 ທີ່ຜ່ານມາ, ເຊິ່ງໄດ້ຍົກໃຫ້ເຫັນຄວາມໝາຍຄວາມສໍາຄັນ ແລະ ຈຸດປະສົງຂອງກອງປະຊຸມ ແມ່ນການຕີລາຄາຜົນສໍາເລັດ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກກອມມູນິດຫວຽດນາມ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ XIV ໄລຍະ 2016-2020 ຜ່ານມາ. ສະຫາຍ ເລ ຮວ່າຍ ຈຸງ ໄດ້ຢືນຢັນວ່າ ພັກ, ລັດຖະບານ ຫວຽດນາມໃຫ້ບູລິມະສິດແກ່ການເສີມຂະຫຍາຍສາຍພົວພັນພິເສດ ຫວຽດນາມ-ລາວ ແລະ ໄດ້ສະແດງຄວາມຂອບໃຈ ມາຍັງຄະນະບໍລິຫານງານສູນກາງພັກ ປປລາວ, ບັນດາການນໍາພັກ, ລັດ, ບັນດາຄະນະອ້ອມຂ້າງສູນກາງພັກ, ກະຊວງ, ຂະແໜງການ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນຂອງລາວ ທີ່ໄດ້ສົ່ງໂທລະເລກອວຍພອນ ກອງປະຊຸມໃຫຍ່ ກໍ່ຄືບັນດາຄູ່ຮ່ວມຕໍາແໜ່ງຂອງຫວຽດນາມ ເຊິ່ງເປັນການສະແດງໃຫ້ເຫັນເຖິງການພົວພັນພິເສດລະຫວ່າງ ຫວຽດນາມ ແລະ ລາວ.

ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ຕີລາຄາສູງຕໍ່ຜົນສຳເລັດການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ເຊິ່ງແມ່ນໝາກຜົນແຫ່ງການສັງລວມສະຕິປັນຍາອັນຍອດຍິ່ງຂອງທົ່ວພັກ, ທົ່ວປວງຊົນ, ເປັນການສະແດງເຖິງຄວາມເປັນເອກະພາບ ແລະ ການຕັດສິນໃຈອັນສູງສົ່ງຂອງພັກກອມມູນິດຫວຽດນາມ ໃນການສືບຕໍ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດ ຕາມທິດສັງຄົມນິຍົມ; ພ້ອມທັງສະແດງຄວາມເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ, ປະຊາຊົນຫວຽດນາມອ້າຍນ້ອງ ຈະສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງ ກວ່າເກົ່າໃນພາລະກິດປ່ຽນແປງໃໝ່, ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກ ຢ່າງມີໄຊ, ສ້າງສາປະເທດຊາດຫວຽດນາມກາຍເປັນປະເທດເຂັ້ມແຂງ ແລະ ວັດທະນາຖາວອນໃນສະຕະວັດທີ XXI.

ສອງຝ່າຍໄດ້ເອກະພາບກັນ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ໄດ້ຮັບການຖະນຸຖະໜອມ ແລະ ເສີມຂະຫຍາຍນັບມື້ເຂົ້າສູ່ລວງເລິກ, ມີຄວາມສະໜິດສະໜົມ, ໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ, ເປັນການພົວພັນທີ່ເປັນແບບຢ່າງ, ຊື່ສັດບໍລິສຸດ ທີ່ຫາຍາກ, ເປັນໜຶ່ງໃນປັດໃຈຕັດສິນໄຊຊະນະຂອງພາລະກິດປະຕິວັດຂອງສອງປະເທດ ລາວ ແລະ ຫວຽດນາມ. ສອງຝ່າຍຢືນຢັນຈະເຮັດສຸດຄວາມສາມາດຂອງຕົນເພື່ອປົກປັກຮັກສາ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງປະເທດ ລາວ-ຫວຽດນາມ ໃຫ້ນັບມື້ໄດ້ຮັບການຂະຫຍາຍຕົວ ແລະ ຂຽວສົດງົດງາມຕະຫຼອດການະນານ.

2. **ພິທີມອບ-ຮັບ ໜ້າທີ່ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່**




ພິທີມອບ-ຮັບໜ້າທີ່ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ລະຫວ່າງ ສະຫາຍ ປອ ນາງ ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຜູ້ເກົ່າ ແລະ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະ

ເທດສູນກາງພັກ ຜູ້ໃໝ່ ໄດ້ຈັດຂຶ້ນໃນວັນທີ 5 ເມສາ 2021 ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍການໃຫ້ກຽດເປັນປະທານ ຂອງ ສະຫາຍ ປອ. ຄໍາພັນ ພົມມະທັດ, ກໍາມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາແຫ່ງລັດ, ມີບັນດາສະຫາຍຄະນະພັກ, ການນໍາ ແລະ ສະມາຊິກພັກ, ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ການມອບ-ຮັບໜ້າທີ່ຄັ້ງນີ້ ແມ່ນປະຕິບັດຕາມຄໍາສັ່ງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການຍົກຍ້າຍ ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ ໄປຮັບໜ້າທີ່ໃໝ່ຢູ່ສະພາແຫ່ງຊາດ ສະບັບເລກທີ 08/ກມສພ, ລົງວັນທີ 24/3/2021 ແລະ ຕາມມະຕິຕົກລົງແຕ່ງຕັ້ງ ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ ເປັນເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ສະບັບເລກທີ 21/ກມສພ, ລົງວັນທີ 24/3/2021.

**3. ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ຕ້ອນຮັບເອກອັກຄະລັດຖະທູດ ຫວຽດນາມ ປະຈໍາ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ**



ວັນທີ 9 ເມສາ 2021, ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບເອກອັກຄະລັດຖະທູດ ຫວຽດນາມ ປະຈໍາ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ ທີ່ ສໍານັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ຫຼັກ 6.

**4. ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ຕ້ອນຮັບເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ**



ວັນທີ 21 ເມສາ 2021, ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ ເພື່ອມອບຈົດໝາຍທາງວາຈາ ຈາກ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ເຖິງ ສະຫາຍ ກິມ ເຈິງອຶນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ ກ່ຽວກັບການແຈ້ງຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ປປລາວ.

**5. ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ຕ້ອນຮັບອຸປະທູດ ສປ.ຈີນ ປະຈຳ ສປປ ລາວ**



ວັນທີ 12/4/2021, ອຸປະທູດ ສປ.ຈີນ ປະຈຳ ສປປ ລາວ ມອບໂທລະເລກຊົມເຊີຍຈາກ ສະຫາຍຫົວໜ້າ ຄຕພ ຈີນ ເຖິງ ສະຫາຍ ທອງສະຫວັນ ພົມວິຫານ, ເນື່ອງໃນໂອກາດໄດ້ຖືກແຕ່ງຕັ້ງເປັນເລຂາຄະນະພັກ, ຫົວໜ້າ ຄຕພ ລາວ ຜູ້ໃໝ່.

**6. ພິທີສູດຕຶກສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ ຫຼັກ 6**



ວັນທີ 8 ເມສາ 2021, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີສູດຕຶກສຳນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ຫຼັກ 6 ເປັນປີທີ 3.

**7. ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ຕ້ອນຮັບ ຫົວໜ້າວິທະຍຸສາກົນ CRI ປະຈຳ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ**



ວັນທີ 9/4/2021, ສະຫາຍ ທອງສະຫວັນ ພົມວິຫານ, ເລຂາຄະນະພັກ, ຫົວໜ້າ ຄຕພ ຕ້ອນຮັບ ທ່ານ ນາງ ແສງແກ້ວ (ມົ້ວ ສຽວຫລິງ), ຫົວໜ້າວິທະຍຸສາກົນ CRI ສປ.ຈີນ ປະຈຳ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ ທີ່ຄະນະພົວພັນຕ່າງປະເທດສູນກາງພັກ ຫຼັກ 6.

**8. ສະຫາຍ ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາ ສປປ ລາວ**



ວັນທີ 6 ເມສາ 2021, ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາ ສປປ ລາວ.

**9. ສະຫາຍ ສົມດີ ບຸນຄຸ້ມ, ຮອງຫົວໜ້າ ຄຕພ ນໍາພາຄະນະ ໄປວາງພວງມາລາໄຫວ້ອາໄລ ສະຫາຍ ວິດົງ ໄຊຍະສອນ ແລະ ສະຫາຍ ນາງ ແກ້ວສາຍໃຈ ໄຊຍະສອນ ແລະ ພ້ອມດ້ວຍລູກຫຼານ**



ວັນທີ 6 ເມສາ 2021, ສະຫາຍ ສົມດີ ບຸນຄຸ້ມ, ຮອງຫົວໜ້າ ຄຕພ ນໍາພາຄະນະ ໄປວາງພວງມາລາໄຫວ້ອາໄລເຖິງດວງວິນຍານຂອງ ສະຫາຍ ວິດົງ ໄຊຍະສອນ, ອະດີດກໍາມະການສູນກາງພັກສະໄໝທີ X, ອະດີດເລຂາພັກແຂວງ ເຈົ້າແຂວງໆວຽງຈັນ, ອະດີດລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ ແລະ ສະຫາຍ ນາງ ແກ້ວສາຍໃຈ ໄຊຍະສອນ, ພັນລະຍາຂອງ ສະຫາຍ ຈູມມະລີ ໄຊຍະສອນ, ອະດີດເລຂາທິການໃຫຍ່, ອະດີດປະທານປະເທດ ແລະ ພ້ອມດ້ວຍລູກຫຼານທີ່ໄດ້ເສຍຊີວິດ.

**10. ສະຫາຍ ສົມດີ ບຸນຄຸ້ມ, ຮອງຫົວໜ້າ ຄຕພ ເຂົ້າຮ່ວມພິທີ ມອບ-ຮັບເງິນ ຈາກ ສະມາຄົມມິດຕະພາບລາວ-ສປປ ເກົາຫຼີ**




ວັນທີ 22 ເມສາ 2021, ສະຫາຍ ສົມດີ ບຸນຄຸ້ມ, ຮອງຫົວໜ້າ ຄຕພ ເຂົ້າຮ່ວມພິທີ ມອບ-ຮັບເງິນ ຈາກ ສະມາຄົມມິດຕະພາບລາວ-ສປປ ເກົາຫຼີ ເພື່ອສົມທົບທຶນ-ເບ້ຍລ້ຽງໃຫ້ນັກສຶກສາຈາກ ຄຕພ ສປປ ເກົາຫຼີ ທີ່ມາຮຽນຢູ່ ມະຫາວິທະຍາໄລແຫ່ງຊາດລາວ.

**11. ສະຫາຍ ສົມດີ ບຸນຄຸ້ມ, ຮອງຫົວໜ້າ ຄຕພ ນຳພາຄະນະໄປວາງພວງມາລາໄຫວ້ອາໄລ ເຖິງດວງວິນຍານ ແມ່ຂອງ ສະຫາຍ ສີສຸພັນ ອ່ອນປະດິດ**



ວັນທີ 2 ເມສາ 2021, ສະຫາຍ ສົມດີ ບຸນຄຸ້ມ, ນຳພາຄະນະໄປວາງພວງມາລາໄຫວ້ອາໄລ ເຖິງດວງວິນຍານ ແມ່ ຂອງ ສະຫາຍ ສີສຸພັນ ອ່ອນປະດິດ, ພະນັກງານ ຄຕພ.